ພິທີ່ : ຜ່ານແຜນຄຸ້ມຄອງສິ່ງແວດລ້ອມໂຮງງານຂົບຫີນຜາ.
ຂຽນໂດຍ ທ່ານ ທະວິຫລ້າ ອຸດທີລາດ ,ຜູ້ຮັບຜິດຊອບ ຂໍ້ມູນຂ່າວສານ,ອຊ
ມື້ອັງຄານທີ່ 24 ພະຈິກ 2015 ເວລາ 14: 53 - ແກ້ໄຂລ່າສຸດ ມື້ສຸກທີ່ 25 ທັນວາ 2015 ເວລາ 11: 40
ຜ່ານແຜນກາານຄຸ້ມຄອງສິ່ງແວດລ້ອມ ໂຮງງານ ຂົບຫີນຜາ ສາລິກາ

ຢູ່ບ້ານໂຮມໄຊ ເມືອງໄຊ ແຂວງອຸດົມໄຊ

ວັນຊາດທີ່ : 2 ທັນວາ ຄົບຮອບ 40 ປີ ທີ່ມູນວຽນມາອິກວາລະໜືງ
,ປວງຊົນທັງຊາດພ້ວມກະກຽມເຫຼີມສະຫຼວງ ວັນປະຫວັດສາດທີ່ ສຳຄັນຂອງຊາດລາວ ແລະ
ເພື່ອກະກຽມເປີດກອງປະຊຸມໃຫ່ຍ ຂອງ ພະແນກຊັບພະຍາກອນ
ທຳມະຊາດ ແລະ ສິ່ງແວດລ້ອມ ຄັ້ງທີ່ : I ນີ້ ທັງຂະແໜ່ງສິ່ງແວດລ້ອມ ພຊສ ໄດ້ເປີດກອງປະຊຸມ
ຜ່ານແຜນກາານຄຸ້ມຄອງສິ່ງແວດລ້ອມ ໂຮງງານ ຂົບຫີນຜາ ສາລິກາ ຢູ່ບ້ານ ໂຮມໄຊ ເມືອງໄຊ
ແຂວງອຸດົມໄຊ ໃນເວລາ 8 : 30 ຂອງວັນທີ່ :19 ພະຈິກ 2015 ໂດຍຮ່ວມເປັນປະທານ ຂອງ ທ່ານ ດຣ
ຄໍາຜິວໄຕ ບົວວອນ ຮອງເລຂາພັກ ຮອງຫົວໜ້າພະແນກຊັບພະຍາກອນທຳມະຊາດ ແລະ
ສິ່ງແວດລ້ອມເປັນປະທານ ແລະ ກອງປະຊຸມຄັ້ງນີ້ມີຜູ່ເຂົ້າ ຮ່ວມທັງໝົດ : 23 ທ່ານ ,ຍິງ 1
ທ່ານ ,ຜູ່ເຂົ້າຮ່ວມຜ່ານບົດລາຍງານ ແຜນກາານຄຸ້ມສິ່ງແວດລ້ອມ ໂຮງງາານ ຂົບຫີນຜາ ສາລິກາ
ຢູ່ ບ້ານໂຮມໄຊ ເມືອງໄຊ ແຂວງອຸດົມໄຊ ມີຄະນະກຳມະການສິ່ງແວດລ້ອມຂັ້ນແຂວງ ,ເມືອງ ແລະ
ມີອຳນາດການປົກຄອງບ້ານ ,ບ້ານໂຮມ ໄຊ ພ້ອມດ້ວຍຂະແໜ່ງການທີ່ກ່ຽວຂ້ອງ ຂອງ ພຊສ
ເຂົ້າຮ່ວມເພື່ອຄົ້ນຄ້ວາ ແລະ ປຶກສາຫາລຶ ຜົນກະທົບຕໍ່ສິ່ງແວດລ້ອມທີ່ເກີດຈາກ
ກິດຈະກຳຕ່າງໆຂອງໂຮງງານ,ລວມທັງການຊອກຫາວິທີ່ການ ,ມາດຕະການແກ້ໄຂ ແລະ
ຫຼຸດຜ່ອນບັນຫາຜົນກະທົບສິ່ງແວດລ້ອມ ແລະ ສັງຄົມ.

 1 / 3

ພິທີ່ : ຜ່ານແຜນຄຸ້ມຄອງສິ່ງແວດລ້ອມໂຮງງານຂົບຫີນຜາ.
ຂຽນໂດຍ ທ່ານ ທະວິຫລ້າ ອຸດທີລາດ ,ຜູ້ຮັບຜິດຊອບ ຂໍ້ມູນຂ່າວສານ,ອຊ
ມື້ອັງຄານທີ່ 24 ພະຈິກ 2015 ເວລາ 14: 53 - ແກ້ໄຂລ່າສຸດ ມື້ສຸກທີ່ 25 ທັນວາ 2015 ເວລາ 11: 40

ໂຮງງານຂົບຫີນຜາ ສີພັນ ສາລິກາ ຈະໄດ້ສ້າງຕັ້ງຂື້ນທີ່ ບ້ານ ໂຮມສຸກ ເມືອງໄຊ
ແຂວງອຸດົມໄຊ ມີເນື້ອທີ່ທັງໝົດ :3 ເຮັກຕາທີ່

ລັດຖະບານໄດ້ອະນຸຍາດໃຫ້ບໍລິສັດສາມາດສຳຫຼວດ ແລະ ຊອກຄົ້ນໄດ້ ແລະ
ມູນຄ່າການລົງທຶນທັງໝົດ : 1.555.000.000 ກີບ / 1ມ

,ຂົບຫີນຂະໜາດໄດ້ຄື : ຂົບຫີນຂະໜາດ : 0,5 – 10 ຊມ ມູນຄ່າ : 100,000 ກີບ / 1ມ ,ຂົບຫີນຂະໜາດ :
10 - 14 ຊມ ມູນຄ່າ :

100,000 ກີບ / 1ມ ແລະ ຂົບຫີນຂະໜາດ : 16 – 19 ຊມ ມູນຄ່າ : 80,000 ກີບ / 1ມ ,ຂົບຫີນຂະໜາດ : 20 –
24 ຊມ ມູນຄ່າ :

90,000 ກີບ / 1ມ ຕາມລຳດັບ ໂດຍມີກຳລັງຄວາມສາມາດການຜະລິດທັງໝົດໄດ້ :22,500 ແມັດກ້ອນ / ປີ
 ແລະ ການຜະລິດທັງໝົດ

ຂອງໂຮງງານໄດ້ສົ່ງອອກຮັບໃຊ້ ພາຍໃນ ແລະ ຕ່າງປະເທດ.

ໃນຕອນທ້າຍ ກອງປະຊຸມທັງປະທານກໍ່ສະເໜີໃຫ້ຄະນະກຳມະການສິ່ງແວດລ້ອມ ຂັ້ນແຂວງ, ເມືອງ ,
ບ້ານ ແລະ ຂະແໜງການທີ່ກ່ຽວ

ຂ້ອງນັ້ນໃຫ້ປະສານງານ ທຸກພາກສ່ວນ ແລະ ລົງສຳຫຼວດ
ຜົນກະທົບສິ່ງແວດລ້ອມລະອຽດ,ເພື່ອບໍ່ໃຫ້ມີຜົບກະທົບເກີດຂື້ນໃນການກໍ່

ສ້າງໂຮງງານ ແລະ ໃຫ້ລາຍງານຜົນສຳຫຼວດເພື່ອຄົ້ນຄ້ວາ ພິຈາລະນາຕາມແຕ່ລະຂັ້ນຕອນ.

 2 / 3

ພິທີ່ : ຜ່ານແຜນຄຸ້ມຄອງສິ່ງແວດລ້ອມໂຮງງານຂົບຫີນຜາ.
ຂຽນໂດຍ ທ່ານ ທະວິຫລ້າ ອຸດທີລາດ ,ຜູ້ຮັບຜິດຊອບ ຂໍ້ມູນຂ່າວສານ,ອຊ
ມື້ອັງຄານທີ່ 24 ພະຈິກ 2015 ເວລາ 14: 53 - ແກ້ໄຂລ່າສຸດ ມື້ສຸກທີ່ 25 ທັນວາ 2015 ເວລາ 11: 40

ຂໍຂອບໃຈ ທຸກທ່ານ.
 3 / 3